ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ສຳນັກງານປົກຄອງແຂວງ

ເລກທີ 15 / ຈຂ.ຊຂ

ວັນທີ 11 / 7 / 2013

# ຄຳສັ່ງ

## ຂອງທ່ານເຈົ້າແຂວງຊຽງຂວາງ

## ວ່າດ້ວຍການ: ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ບຸກລຸກ ແລະ ນຳໃຊ້ ທີ່ດິນຂອງລັດ ຢູ່ເຂດຄວາມຮັບຜິດຊອບຂອງສູນປັບປຸງ ແລະ ຂະຫຍາຍພັນສັດ ( ພູຂີ້ເຖົ້າ ) ເມືອງແປກ ແຂວງຊຽງຂວາງ.

**ເຖິງ : ທ່ານເຈົ້າເມືອງແປກ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ສູນປັບປຸງ ແລະ ຂະຫຍາຍພັນສັດ ແລະ ອຳນາດການປົກຄອງບ້ານ ນາຫອຍ.**

- ອີງຕາມ: ພາລະບົດບາດ, ສິດ ແລະໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ລະບຸ ໄວ້ໃນ ໝວດທີ III ມາດຕາ 14 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສ ປ ປ ລາວ.
- ອີງຕາມໜັງສະເໜີຂອງພະແນກກະສິກຳ ແລະປ່າໄມ້ແຂວງ ສະບັບເລກທີ.0701/ ກປຂ.ຊຂ, ລົງວັນທີ .4. /.7./ 2013.

ເພື່ອເຮັດໃຫ້ເຂດສູນປັບປຸງ ແລະຂະຫຍາຍພັນສັດ ( ພູຂີ້ເຖົ້າ ) ເມືອງແປກ, ໄດ້ຮັບການພັດທະນາ ໄປຕາມແຜນ ຜັງ, ມີເນື້ອທີ່ພຽງພໍໃນການກໍ່ສ້າງພື້ນຖານໂຄງລ່າງ, ຮັບປະກັນໄດ້ຄວາມເປັນລະບຽບຮຽບຮ້ອຍຢູ່ໃນເຂດດັ່ງກ່າວ.

## ເຈົ້າແຂວງຊຽງຂວາງຈິ່ງອອກຄຳສັ່ງລະອຽດດັ່ງນີ້ :

1. ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕ່າງໆ ບໍ່ໃຫ້ໄປຈັບຈອງທີ່ດິນເພື່ອຈຸດປະສົງໃນການກໍ່ສ້າງ, ການລ້ຽງສັດ, ການປູກຝັງ ແລະ ກິດຈະການອື່ນໆ ຢູ່ເຂດສູນປັບປຸງ ແລະ ຂະຫຍາຍພັນສັດ ( ພູຂີ້ເຖົ້າ ) ເມືອງແປກ, ແຂວງຊຽງຂວາງ ເປັນອັນຂາດ.

2. ຖ້າຫາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງໃດ ຫາກໄດ້ໄປຈັບຈອງທີ່ດິນ ຫຼື ຖ້າບຸກຄົນ, ນິຕິບຸກຄົນໃດຫາກໄດ້ມີ ການກໍ່ສ້າງແລ້ວ ຫຼື ກຳລັງທີ່ຈະກໍ່ສ້າງຢູ່ເຂດດັ່ງກ່າວ ແມ່ນໃຫ້ຮີບຮ້ອນຖອນຕົວອອກໂດຍໄວ, ລັດຈະບໍ່ມີການຕອບແທນ ແຕ່ປະການໃດທັງສິ້ນ, ຖ້າຫາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງໃດລະເມີດຈະໄດ້ປະຕິບັດຕາມລະບຽບກົດໝາຍຢ່າງ ເຂັ້ມງວດ.

3. ມອບໃຫ້ທ່ານເຈົ້າເມືອງແປກ, ພະແນກການກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດແລະ ສິ່ງແວດລ້ອມແຂວງສູນປັບປຸງ ແລະ ຂະຫຍາຍພັນສັດ (ພູຊີ້ເຫຼົ້າ), ອຳນາດການປົກຄອງບ້ານນາຫອຍ ແລະທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະແຈ້ງຄຳສັ່ງສະບັບນີ້ ໃຫ້ແກ່ພໍ່ແມ່ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ເປັນຕົ້ນແມ່ນບັນດາຄອບ ຄົວທີ່ໄດ້ບຸກລຸກ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ດັ່ງນັ້ນ, ເຈົ້າແຂວງ ແຂວງຊຽງຂວາງ ຈຶ່ງໄດ້ອອກຄຳສັ່ງສະບັບນີ້ ແຈ້ງມາຍັງທຸກພາກສ່ວນ ຈົ່ງຮັບຮູ້ ແລະ ພ້ອມ ກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫວັງວ່າທຸກທ່ານມີຄວາມເປັນເຈົ້າການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

**ບ່ອນນຳສົ່ງ:**

1. ພະແນກກະສິກຳແລະປ່າໄມ້ແຂວງ 1 ສະບັບ
2. ເຈົ້າເມືອງງ ແປກ 1ສະບັບ
3. ພະແນກຊັບພະຍາກອນທຳມະຊາດ 1 ສະບັບ
4. ສູນປັບປຸງແລະຂະຫຍາຍພັນສັດ 1 ສະບັບ
5. ສຳເນົາ 1 ສະບັບ

**ເຈົ້າແຂວງ ແຂວງຊຽງຂວາງ**

ຮອງ/ເກຍ

ພຈວ. ດຣ. ເສິນສຸກ ສິນພະວົງ